ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ...09...../ ຈຂອປ

ອັດຕະປື,ວັນທີ07 ພຶດສະພາ 2024

# ຄຳສັ່ງ
## ວ່າດ້ວຍການເພີ່ມທະວີຄຸ້ມຄອງກິດຈະການແຮ່ທາດ ຢູ່ພາຍໃນແຂວງອັດຕະປື

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ສະພາບການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງກິດຈະການແຮ່ທາດ ໃນປະຈຸບັນຢູ່ພາຍໃນແຂວງອັດຕະປື.

## ເຈົ້າແຂວງ ອອກຄຳສັ່ງ:

**1.** ໃຫ້ບັນດາບໍລິສັດ, ໂຄງການລົງທຶນກິດຈະການດ້ານແຮ່ທາດ ແລະທຸລະກິດກ່ຽວກັບແຮ່ທາດ ທີ່ມີສັນຍາກັບລັດຖະບານ ແລະ ອົງການປົກຄອງແຂວງ (MOU, CA) ເອົາໃຈໃສ່ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານກ່ຽວກັບແຮ່ທາດ ໄປຕາມຂັ້ນຕອນ, ລະບຽບກົດໝາຍ ແລະ ສັນຍາສຳປະທານທີ່ກ່ຽວຂ້ອງກຳນົດ. ນຳໃຊ້ຊັບພະຍາກອນແຮ່ທາດຢ່າງປະຢັດ, ມີປະສິດພາບ, ປະສິດທິຜົນ, ຮັບປະກັນຄວາມປອດໄພ, ພັດທະນາເຂດບໍ່ແຮ່ໃຫ້ຍືນຍົງ ແລະ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ເຊັ່ນ:

- ວຽກງານຊອກຄົ້ນ, ສຳຫຼວດແຮ່ທາດ: ໃຫ້ບໍລິສັດເອົາໃຈໃສ່ສຶກສາ, ຊອກຄົ້ນ, ຢັ່ງສືບ, ສຳຫຼວດທາງດ້ານໂຄງສ້າງທໍລະນີວິທະຍາ, ຈຸດປະກົດແຮ່ທາດ, ວິໄຈແຮ່ທາດ, ປະເມີນປະລິມານຊັບພະຍາກອນແຮ່ທາດ ແລະ ຄິດໄລ່ປະລິມານສະສົມ ຂອງແຫຼ່ງແຮ່ທາດ ໃຫ້ໄປຕາມຂັ້ນຕອນ, ມາດຖານເຕັກນິກ, ແຜນດຳເນີນງານທີ່ກະຊວງພະລັງງານ ແລະ ບໍ່ແຮ່ຮັບຮອງ ແລະ ລາຍງານຜົນການສຶກສາສຳຫຼວດ, ຄັດຈ້ອນເນື້ອທີ່ແຫຼ່ງແຮ່ທີ່ເປັນເສດຖະກິດເພື່ອກ້າວເຂົ້າສູ່ຂັ້ນຕອນສຶກສາບົດວິພາກເສດຖະກິດ-ເຕັກນິກ ແລະ ເນື້ອທີ່ທີ່ບໍ່ເປັນເສດຖະກິດ ສົ່ງຄືນໃຫ້ລັດຕາມລະບຽບ ແລະ ຕາມກຳນົດເວລາ, ບໍ່ອະນຸຍາດໃຫ້ຈັບຈ່ອງ ຫຼື ໃຫ້ບຸກຄົນອື່ນສວຍໂອກາດເຂົ້າໄປຂຸດຄົ້ນ, ຖ້າພາກລັດພົບເຫັນຈະຖືກດຳເນີນຄະດີຕາມກົດໝາຍ; ສຳລັບສິນແຮ່ທີ່ໄດ້ຈາກການສຳຫຼວດທຸກໆໂຄງການ ຕ້ອງໄດ້ປະເມີນລະອຽດ ລວມທັງມູນຄ່າທັງໝົດທີ່ໄດ້ຈາກສິນແຮ່ດັ່ງກ່າວ ຕ້ອງເອົາເຂົ້າເປັນຊັບສິນລວມຂອງແຂວງ ແລ້ວລາຍງານລັດຖະບານ ແລະ ຈະບໍ່ອະນຸຍາດໃຫ້ປຸງແຕ່ງ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກຂັ້ນເທິງຢ່າງເດັດຂາດ.
- ວຽກງານຂຸດຄົ້ນ, ປຸງແຕ່ງ ແລະ ຫຼໍ່ຫຼອມແຮ່ທາດ: ໃຫ້ບໍລິສັດດຳເນີນການຂຸດຄົ້ນບໍ່ແຮ່ທັງບໍ່ເປີດ ແລະ ບໍ່ໃຕ້ດິນໄປຕາມເຕັກນິກ, ການຂົນສົ່ງໃຫ້ຮັບປະກັນຄວາມປອດໄພ, ຫຼີກລ້ຽງອຸປະຕິເຫດທາງດ້ານແຮງງານ ໃນເຂດກິດຈະການບໍ່ແຮ່ເຊັ່ນ: ເຂດໂຮງງານປຸງແຕ່ງແຮ່ທາດ, ອ່າງບົ່ມແຮ່, ອ່າງຫາງແຮ່ ແລະ ສະຖານທີ່ຖິ້ມດິນເຟືອຍ ຕ້ອງກຳນົດພື້ນທີ່ຢ່າງເໝາະສົມ, ປອດໄພ, ບໍ່ອະນຸຍາດໃຫ້ຖິ້ມດິນເຟືອຍຕາມເປີ້ນພູ ແລະ ກໍ່ສ້າງກິດຈະການບໍ່ແຮ່ ຢູ່ຈຸດທີ່ມີຄວາມສ່ຽງດິນຄ້ອຍຊັນ, ເທິງສັນພູ, ເປີ້ນພູ, ເຂດຍອດຫ້ວຍ, ແຄມຫ້ວຍ ທີ່ອາດກໍ່ໃຫ້ເກີດດິນເຈື່ອນ, ອ່າງແຕກໃນຊ່ວງລະດູຝົນເຊິ່ງເປັນສາເຫດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ, ທຳລາຍປ່າໄມ້, ແຫລ່ງນໍ້າ, ລະບົບນິເວດວິທະຍາສັດປ່າ, ສັດນໍ້າ ແລະ ກໍ່ໃຫ້ເກີດເປັນມົນລະພິດຕໍ່ສິ່ງແວດລ້ອມ-ສັງຄົມ.

- ບໍລິມາດແຮ່ທີ່ໄດ້ຈາກການຂຸດຄົ້ນ, ແຮ່ປ້ອນໂຮງງານ, ໂດຍສະເພາະການຫຼໍ່ຫຼອມແຮ່ທາດ ແຕ່ລະຄັ້ງຕ້ອງມີວິຊາການພາກລັດເຂົ້າຮ່ວມຕິດຕາມກວດກາ, ຊັ່ງນໍ້າໜັກ, ທົດລອງກວດກາວິໄຈຄຸນນະພາບ, ຈົດບັນທຶກລົງລາຍເຊັນເປັນຫຼັກຖານ ແລະ ມີສາງເກັບມ້ຽນຢ່າງປອດໄພ.

- ການເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕ້ອງມີການກວດກາ, ຕິດຊັ່ງ ແລະ ເອກະສານຢັ້ງຢືນຈາກພະແນກພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນກ່ຽວຂ້ອງທຸກຄັ້ງ, ບໍ່ອະນຸຍາດໃຫ້ໂຄງການເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ. ຖ້າເຈົ້າໜ້າທີ່ພົບເຫັນ ໃຫ້ຢຶດເປັນຂອງລັດ ໂດຍບໍ່ມີການຕໍ່ລອງ.

**2.** ທຸກໆໂຄງການທີ່ດໍາເນີນກິດຈະການແຮ່ທາດ ຢູ່ໃນແຂວງອັດຕະປື ໃຫ້ຈັດຕັ້ງປະຕິບັດຕາມສັນຍາ, ຕາມຄໍາສັ່ງຂອງຂັ້ນເທິງ ແລະ ຕ້ອງມີການຄຸ້ມຄອງ, ຕິດຕາມກວດກາຢ່າງຮັດກຸ່ມ ແຂວງຈະແຕ່ງຕັ້ງພະນັກງານເຂົ້າຮ່ວມເຮັດໜ້າທີ່ຄຸ້ມຄອງ, ຕິດຕາມປະຈໍາຢູ່ພາກສະໜາມ ຕາມສິດ, ພາລະບົດບາດ, ຄວາມຮັບຜິດຊອບຂອງຂະແໜງການປະກອບມີ: ພະແນກພະລັງງານ ແລະ ບໍ່ແຮ່; ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ; ພະແນກການເງິນແລະ ບາງຂະແໜງການທີ່ຈໍາເປັນ (ແຮງງານ ແລະ ສະຫວັດດີການສັງຄົມ; ປກສ; ກະສິກໍາ ແລະ ປ່າໄມ້; ອຸດສາຫະກໍາ ແລະ ການຄ້າ) ຕາມແຕ່ລະກໍລະນີ. ບໍລິສັດຕ້ອງໃຫ້ການຮ່ວມມື, ອໍານວຍຄວາມສະດວກ, ລາຍງານແຜນການເຄື່ອນໄຫວຕ່າງໆ ໃຫ້ພະນັກງານລັດເຂົ້າເຖິງຂໍ້ມູນທີ່ຖືກຕ້ອງ, ຊັດເຈນ ແລະ ໂປ່ງໃສ.

**3.** ບໍລິສັດ ຕ້ອງເອົາໃຈໃສ່ປະຕິບັດພັນທະຕ່າງໆຂອງຕົນ ຕາມສັນຍາສໍາປະທານໃຫ້ຄົບຖ້ວນ ແລະ ຕາມກໍານົດເວລາ. ສໍາລັບແຮ່ທາດ, ຜະລິດຕະພັນແຮ່ທາດເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ກ່ອນການຈໍາໜ່າຍຕ້ອງໄດ້ຊໍາລະຄ່າຊັບພະຍາກອນແຮ່ທາດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 28 ກັນຍາ 2023 ແລະ ຄ່າພາສີ, ອາກອນຕ່າງໆຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**4.** ກໍລະນີໂຄງການໃດ ມີການລະເມີດລະບຽບກົດໝາຍ ແລະ ສັນຍາສໍາປະທານ, ບໍ່ປະຕິບັດພັນທະ, ບໍ່ເຄື່ອນໄຫວວຽກງານ, ແກ່ຍາວເວລາ, ບໍ່ປະຕິບັດຕາມຂັ້ນຕອນ, ໂອນສິດ ຫຼື ເອົາຄູ່ຮ່ວມທຶນເຂົ້າຮັບເໝົາຕໍ່ກິດຈະການໃດໜຶ່ງທີ່ບໍ່ໄດ້ຮັບອະນຸຍາດຈາກແຂວງ, ບໍລິສັດດັ່ງກ່າວຈະຖືກດໍາເນີນມາດຕະການຕາມດໍາລັດ ສະບັບເລກທີ 373/ລບ, ລົງວັນທີ 1 ທັນວາ 2023. ບໍລິສັດທີ່ລະເມີດນັ້ນບໍ່ໃຫ້ການຮ່ວມມື, ເປັນການສ້າງຄວາມຫຍຸ້ງຍາກໃຫ້ແຂວງ ແລະ ສ້າງຄວາມເສຍຫາຍແກ່ປະເທດຊາດ ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງລາຍງານການນໍາຂອງແຂວງດ່ວນ ເພື່ອຄົ້ນຄວ້າລາຍງານ ແລະ ສະເໜີລັດຖະບານຍົກເລີກສັນຍາ.

**5.** ບັນດາພະແນກການກ່ຽວຂ້ອງຂອງແຂວງ, ເມືອງ, ບ້ານກ່ຽວຂ້ອງ ແລະ ບັນດາບໍລິສັດທີ່ເຄື່ອນໄຫວກິດຈະການແຮ່ທາດຢູ່ພາຍໃນແຂວງອັດຕະປື ຈົ່ງຮັບຮູ້, ໃຫ້ການຮ່ວມມືຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ.

**6.** ຄໍາສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄໍາສັ່ງປ່ຽນແປງໃໝ່.

**ເຈົ້າແຂວງ**

ແຂວງອັດຕະປື
ເຈົ້າແຂວງ

ພົທ ວັນທອງ ກອງມະນີ